# ການປູກຫວາຍໂຕ່ນ

<u>ຄຸນປະໂຫຍດ</u>

ການປູກຫວາຍໂຕ່ນເພື່ອ:

- ນຳໃຊ້ເສັ້ນເຂົ້າໃນການເຮັດຫັດຖະກຳຈັກສານ
- ເພື່ອນຳໃຊ້ຍອດ ຕັດບໍລິໂພກ, ຂາຍຍ່ອຍ ຫຼື ປຸງແຕ່ງໃຫ້ແຫ້ງເກັບຮັກສາ ແລະ ສົ່ງຂາຍ.



ເສັ້ນຫວາຍທີ່ນຳໃຊ້ເຂົ້າໃນຫັດຖະກຳຈັກສານ

## 1. ປັດໃຈທີ່ຄວນເລືອກ

- ເນື້ອທີ່ຈະຕ້ອງຢູ່ກາງແຈ້ງສຳລັບຫວາຍເອົາຍອດ
- ເນື້ອທີ່ຕ້ອງຢູ່ກ້ອງຮົ່ມໄມ້ຖ້າປູກເພື່ອຕັດເສັ້ນ
- ລັກສະນະຂອງດິນ ຂ້ອນຂ້າງອຸດົມສົມບູນດີ
- ນ້ຳບໍ່ຖ້ວມຢູ່ບ່ອນທີ່ສູງຍິ່ງເປັນການດີ.



ຕົ້ນຫວາຍຢູ່ສວນປູກທົດລອງ ເອຊຽນ— ອີຢູ ອາຍຸໄດ້ 2 ປີ, ບ້ານໂພນໂຮງ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ

## 2. ເຕັກນິກການປູກ

**ແນວພັນ ແລະ ລະດູການ:**

- ກະກຽມແນວພັນໃຫ້ໄດ້ ອາຍຸ 9 — 12 ເດືອນ
- ລະດູການທີ່ເໝາະສົມ ເດືອນ 5 (ພຶດສະພາ)

**ການຂຸດຂຸມ ແລະ ປູກ:**

- ຂຸມປູກຂະໜາດ30X30X30ຊມ (ກວ້າງ,ຍາວ,ເລິກ)
- ໃສ່ຝຸ່ນຄອກຮອງກົ້ນຂຸມ 0,5 ກກ / ຂຸມ.

**ໄລຍະຫ່າງການປູກ:**

- ໄລຍະຫ່າງການປູກແມ່ນ 2X3 ແມັດ

ຫຼັງຈາກປູກແລ້ວຖົມດິນໃຫ້ແໜ້ນແລ້ວຫົດນ້ຳ 1—2 ຄັ້ງຕໍ່ອາທິດ (ຖ້າຝົນບໍ່ຕົກ) ພື້ນທີ່ປູກທີ່ເໝາະສົມສາມາດປູກໄດ້ຢູ່ໃນທົ່ວປະເທດ.

**ການບົວລະບັດຮັກສາ:**

ຫຼັງຈາກປູກໄດ້ 3 ເດືອນໃຫ້ເອົາຝຸ່ນຄອກໃສ່ ໃນອັດຕາສ່ວນ 1 ກກ / ຕົ້ນ ຫຼື ຝຸ່ນວິທະຍາສາດໃສ່ອີກ1 ຄັ້ງໃນອັດຕາສ່ວນ 200 ກຼ / ຕົ້ນ (ສູດ15— 15— 15 ຫຼື 18— 64— 00)ພ້ອມທັງເສຍຫຍ້າ.ຫວາຍຊະນິດນີ້ຫຼັງຈາກປູກໄດ້ 2 ປີ ຈຶ່ງສາມາດຕັດຍອດໄດ້.

## 3. ສະພາບສວນປູກຫວາຍ

ສວນປູກຫວາຍສາມາດຈັດຕັ້ງປະຕິບັດໄດ້ເອງລະດັບຄອບຄົວ ຫຼື ເປັນພື້ນທີ່ກວ້າງໃນທາງທຸລະກິດໂດຍບໍ່ຕ້ອງໃຊ້ແຮງງານຫຼາຍ, ເປັນການລົງທຶນໜ້ອຍສາມາດເກັບກູ້ຜົນຜະລິດໄດ້ຫຼາຍຍ້ອນຫວາຍຊະນິດນີ້ໃຫຍ່,ລາຄາແພງກວ່າຫວາຍແຍ້ສ້າງລາຍຮັບໄດ້ຫຼາຍປີ. ເຊິ່ງສາມາດປູກດ່ຽວ ຫຼື ປູກປະສົມກັບພືດອື່ນໆໄດ້ເນື້ອທີ່ 1 ໄລ່ຂື້ນໄປ (ເຊິ່ງໃຊ້ເບ້ຍປູກປະມານ 260 ເບ້ຍ / 1 ໄລ່, ໄລຍະຫ່າງທີ່ເໝາະສົມ 2X3 ມ) ຫວາຍຊະນິດນີ້ສາມາດປູກເພື່ອບໍລິໂພກ ຫຼື ຮັກສາໄວ້ຂາຍເສັ້ນໄດ້, ໝາຍຄວາມວ່າໃນ 24 ເດືອນຈະສາມາດຕັດຍອດໄດ້ປະມານ 2 — 4 ໜໍ່/ສຸມ ຫຼື ຫຼາຍກວ່ານີ້ຖ້າຫາກຄວາມຊຸ່ມພຽງພໍ.

## 4. ວິທີການຕັດຍອດຂາຍ

ສັງເກດເຫັນວ່າມີຈຳນວນຍອດສະເລ່ຍ 2— 4 ຍອດ

- ຄວນເລືອກຕັດລຳເດີມທີ່ນຳມາປູກນັ້ນເສຍກ່ອນຍ້ອນມັນຈະເປັນລຳອາຍຸແກ່ກ່ອນໝູ່ຖ້າເຫັນວ່າລຳຕົ້ນເດີມໄດ້ເກີດໜໍ່ແລ້ວ.
- ຄັດເລືອກຕັດລຳທີ່ມີໃບຍອ່ຍກຳລັງຈູມຍາວປະມານ 20 ຊມ .
- ຄວນຕັດຍອດໄກ້ຄຽງກັບໜໍ່ໃໝ່ທີ່ກຳລັງເກີດຂື້ນ ແລະ ສູງຈາກໜ້າດິນ 5 ຊັງຕີແມັດ.
- ຕັດຍອດໃນລະດູຝົນຈະໄດ້ໜໍ່ໃຫຍ່ ແລະ ໄດ້ປະລິມານຍອດອ່ອນຫຼາຍ.

# 5. ຜົນໄດ້ຮັບຈາກການປູກຫວາຍ

## 5.1 ຜົນໄດ້ຮັບຈາກການຕັດຍອດຫວາຍ

ສວນປູກຫວາຍທີ່ຖືກຕ້ອງຕາມເຕັກນິກທີ່ໄດ້ແນະນຳ ຈະສາມາດຕັດຍອດໄດ້ຍາວນານເຖິງ 20 — 40 ປີ ແລະ ຈາກການລົງທຶນພຽງຄັ້ງດຽວ ແຕ່ເກັບລາຍຮັບໄດ້ຍາວນານ. ຫວາຍໂຕ່ນຈະບໍ່ທົນຕໍ່ນ້ຳຖ້ວມ, ຖ້າມີນ້ຳຖ້ວມດົນ ຕົ້ນຫວາຍນ້ອຍກໍ່ຈະຕາຍ.



ຕະຫຼາດຂາຍຍອດຫວາຍ

## 5.2 ຜົນໄດ້ຮັບຈາກການຕັດເສັ້ນຫວາຍ

ການປູກຫວາຍເພື່ອຕັດເສັ້ນຈະມີຄວາມແຕກຕ່າງ ທາງດ້ານ ສະຖານທີ່ ຫຼື ປູກໃສ່ກ້ອງປ່າ, ຖ້າຫາກເຮົາປະໄວ້ 5ປີຂຶ້ນໄປ ແລະ ໃສ່ຝຸ່ນຢ່າງໜ້ອຍປີລະ 1 ຄັ້ງເຮົາຈະສາມາດເລືອກຕັດເສັ້ນຫວາຍໄດ້ສູມໜຶ່ງປະມານ 3 — 5 ເສັ້ນຄວາມຍາວສະເລ່ຍ 10 —15 ມ. ສະເພາະສວນປູກຫວາຍເພື່ອ ລວມພັນຢູ່ນ້ຳຊວງທີ່ມີອາຍຸ 9 ປີ ເມື່ອຜ່ານການຕັດເສັ້ນຫວາຍລົງທົດລອງເຫັນວ່າຄວາມຍາວສະເລ່ຍ 18.34 — 20.32 ແມັດ

(ຄຳພອນ ແສງດາລາ ແລະ ສູນທອນ ເກດພັນ 2006).


ໂທ: 021 216080

ຂໍ້ມູນເຕັກນິກຕິດຕໍ່

ທ່ານ ຄຳພອນ ແສງດາລາ

ໂທ: 020 6861101

ໂທ: 021 740253

ຫຼື 021 740252

ໂທ: 021 740544

ຫຼື 021 740543



**ພາຍໃຕ້ການຮ່ວມມື :**

ສະຖາບັນຄົ້ນຄວ້າ ເຕັກນິກ—ວິທະຍາສາດ ກະສິກຳ ແລະ ປ່າໄມ້,

ກອງສົ່ງເສີມກະສິກຳ ແລະ ປ່າໄມ້

**ສະໜັບສະໜຸນໂດຍ:**

ໂຄງການ ສົ່ງເສີມ ກະສິກຳ **(LEAP),**

ກອງທຶນອະນຸລັກທຳມະຊາດໂລກ **(WWF) & (SUFORD)**


ສູນຂໍ້ມູນຂ່າວສານການສົ່ງເສີມ

# ເຕັກນິກການປູກ

# ຫວາຍໂຕ່ນ

***Calamus viminalis***

